**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມຄຸ້ມຄອງວິສາຫະກິດ

ເລກທີ 1455 /ກຄວ

ນະຄອນຫຼວງວຽງຈັນ, ວັນທີ 10 ກໍລະກົດ 2026

# ແຈ້ງການ

**ເຖິງ** : - ພາກລັດ ແລະ ເອກະຊົນ, ຜູ້ລົງທຶນ ທັງພາຍໃນ ແລະ ຕ່າງປະເທດ ທີ່ກ່ຽວຂ້ອງ;
- ເຈົ້າໜ້າທີ່ທະບຽນວິສາຫະກິດ ໃນຂອບເຂດທົ່ວປະເທດ.

**ເລື່ອງ:** ການຈັດຕັ້ງປະຕິບັດ ຂໍ້ຕົກລົງວ່າດ້ວຍການປັບໃໝ ແລະ ການນຳໃຊ້ມາດຕະການອື່ນຕໍ່ຜູ້ລະເມີດກົດໝາຍວ່າດ້ວຍວິສາຫະກິດ ແລະ ການນຳໃຊ້ຮ່າງແບບພິມທີ່ກ່ຽວຂ້ອງ.

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກົມຄຸ້ມຄອງວິສາຫະກິດ ສະບັບເລກທີ 2003/ອຄ, ລົງວັນທີ 09 ກັນຍາ 2025;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການປັບໃໝ ແລະ ການນຳໃຊ້ມາດຕະການອື່ນຕໍ່ຜູ້ລະເມີດກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ 1338/ອຄ, ລົງວັນທີ 13 ພຶດສະພາ 2026.

ເພື່ອຈັດຕັ້ງຜັນຂະຫຍາຍ ຂໍ້ຕົກລົງວ່າດ້ວຍການປັບໃໝ ແລະ ການນຳໃຊ້ມາດຕະການອື່ນຕໍ່ຜູ້ລະເມີດກົດໝາຍວ່າດ້ວຍວິສາຫະກິດ ໃຫ້ມີ ວິທີການ ແລະ ຂັ້ນຕອນ ກ່ຽວກັບວຽກງານການນຳໃຊ້ມາດຕະການຕໍ່ຜູ້ລະເມີດກົດໝາຍວ່າດ້ວຍວິສາຫະກິດ ແນໃສ່ ເຮັດໃຫ້ການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ໃຫ້ມີຄວາມຖືກຕ້ອງ, ລະອຽດ, ຊັດເຈນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ. ສະນັ້ນ, ກົມຄຸ້ມຄອງວິສາຫະກິດ ກະຊວງອຸດສາຫະກຳ ແລະ ການຄ້າ ຈຶ່ງອອກແຈ້ງການແນະນຳ ມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດ ດັ່ງນີ້:

1. ຂໍ້ຕົກລົງວ່າດ້ວຍການປັບໃໝ ແລະ ການນຳໃຊ້ມາດຕະການອື່ນຕໍ່ຜູ້ລະເມີດກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ 1338/ອຄ, ລົງວັນທີ 13 ພຶດສະພາ 2026 ແມ່ນລົງໃນຈົດໝາຍເຫດທາງລັດຖະການ ກະຊວງຍຸຕິທຳ ນັບແຕ່ວັນທີ 25/05/2026 ຊຶ່ງປັດຈຸບັນ ແມ່ນຄົບກຳນົດເວລາ ສິບຫ້າວັນ ຕາມລະບຽບການແລ້ວ. ສະນັ້ນ, ຂໍ້ຕົກລົງ ສະບັບນີ້ ມີຜົນສັກສິດນຳໃຊ້ ນັບແຕ່ວັນທີ 09/07/2026 ເປັນຕົ້ນໄປ.

2. ໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດ ເຜີຍແຜ່ນິຕິກຳສະບັບດັ່ງກ່າວ ໃຫ້ພາກທຸລະກິດ ແລະ ຂະແໜງການທີ່ກ່ຽວຂ້ອງຂອງຕົນ, ພ້ອມທັງ ແນະນຳໃຫ້ເຈົ້າຂອງວິສາຫະກິດ, ຂາຮຸ້ນ, ຜູ້ຖືຮຸ້ນ, ຜູ້ຈັດການ, ຜູ້ອຳນວຍການ ໃຫ້ຮັບຊາບ ແລະ ເຂົ້າໃຈລະອຽດ ກ່ຽວກັບເນື້ອໃນຂໍ້ຕົກລົງສະບັບດັ່ງກ່າວ.

3. ຮ່າງແບບພິມ ກ່ຽວກັບ ວຽກງານການນຳໃຊ້ມາດຕະການຕໍ່ຜູ້ລະເມີດກົດໝາຍວ່າດ້ວຍວິສາຫະກິດ ມີດັ່ງນີ້:
   1) ແຜນວຽກການລົງກວດກາວິສາຫະກິດ;
   2) ຂໍ້ຕົກລົງວ່າດ້ວຍການລົງກວດກາວິສາຫະກິດ;
   3) ໜັງສືແຈ້ງລົງກວດກາວິສາຫະກິດ;
   4) ບົດບັນທຶກ ແນະນຳ, ຄຳກ່າວເຕືອນ ແລະ ນຳໃຊ້ມາດຕະການຕໍ່ຜູ້ລະເມີດກົດໝາຍວ່າດ້ວຍວິສາຫະກິດ
   5) ແຈ້ງການ ໂຈະການນຳໃຊ້ໃບທະບຽນວິສາຫະກິດ;

6) ແຈ້ງການ ຍົກເລີກໂຈະການນຳໃຊ້ໃບທະບຽນວິສາຫະກິດ.

(ລາຍລະອຽດເນື້ອໃນຂອງແຕ່ລະຮ່າງແບບພິມ ແມ່ນລະບຸໄວ້ໃນຄິວອາໂຄດ QR Code) ລຸ່ມນີ້.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດດ້ວຍ.

**ຫົວໜ້າກົມ**

**ອະພິສິດ ແສງສຸລິວົງ**

**ດາວໂຫຼດ ແບບພິມ**